# ທຄຕລ ຈັດຕັ້ງການເຊື່ອມຊຶມມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ X ຂອງພັກ ໃນວັນທີ 11/06/2016.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຈັດຕັ້ງເຊື່ອມຊຶມມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ X ຂອງພັກ ໃຫ້ສະມາຊິກພັກ-ພະນັກງານຫຼັກແຫຼ່ງຂອງຕົນ. ການເຊື່ອມຊຶມດັ່ງກ່າວໄດ້ດຳເນີນໄປເປັນເວລາ 1 ວັນເຕັມ ໃນວັນເສົາ, ວັນທີ 11/06/2016 ຢູ່ທີ່ຫ້ອງປະຊຸມໃຫຍ່ ສະຖາບັນການທະນາຄານ ໂດຍການເປັນປະທານຂອງ **ສະຫາຍ ນ. ວັດທະນາ ດາລາລອຍ** ຄະນະປະຈຳພັກ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ມີບັນດາສະຫາຍ ຄະນະພັກຮາກຖານ, ຄະນະພະແນກ, ສູນ, ສາຂາ , ພ້ອມດ້ວຍສະມາຊິກພັກ-ພະນັກງານ ທຄຕລ, ບໍລິສັດໃນເຄືອ ແລະ ພະນັກງານ ທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມທັງໝົດ 609 ສະຫາຍ, ຍິງ 326 ສະຫາຍ.

ຈຸດປະສົງຂອງການເຊື່ອມຊຶມ ແມ່ນເພື່ອເຮັດໃຫ້ສະມາຊິກພັກ-ພະນັກງານ ມີຄວາມຮັບຮູ້ ແລະ ຄວາມເຂົ້າໃຈຖືກຕ້ອງ ຕໍ່ແນວທາງການເມືອງ ແລະ ແຜນນະໂຍບາຍຂອງພັກ, ບັນດາຄາດໝາຍສູ້ຊົນ ແລະ ໜ້າວຽກຈຸດສຸມ ທີ່ຈະຕ້ອງຈັດຕັ້ງປະຕິບັດໃນຊຸມປີຕໍ່ໜ້າ; ພ້ອມນັ້ນ ເພື່ອໃຫ້ແຕ່ລະຂົງເຂດວຽກງານນຳເອົາເນື້ອໃນຈິດໃຈ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ X ຂອງພັກວາງອອກ ນຳໄປຈັດຕັ້ງຜັນຂະຫຍາຍ ເຂົ້າໃນຂົງເຂດວຽກງານຂອງຕົນ ໂດຍສະເພາະໃນຂະແໜງການທະນາຄານ ເພື່ອໃຫ້ບັນລຸຄາດໝາຍມະຕິ X ທີ່ໄດ້ກຳນົດອອກໃຫ້ກາຍເປັນຮູບປະທຳ.

ໃນພິທີດັ່ງກ່າວ **ສະຫາຍ ນ. ວັດທະນາ ດາລາລອຍ** ຄະນະປະຈຳພັກ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສະເໜີບາງບັນຫາໂດຍສັງເຂບກ່ຽວກັບ: ຜົນສຳເລັດການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ ໄລຍະ 5 ປີ 2011-2015 ໂດຍໄດ້ຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້; ວິໄສທັດການພັດທະນາແຕ່ນີ້ຮອດປີ 2030 ແລະ ທິດທາງວຽກງານຈຸດສຸມສຳລັບໄລຍະ ແຕ່ປີ 2016-2020 ເພື່ອນຳພາປະເທດຊາດຫຼຸດພົ້ນອອກຈາກ ສະຖານະພາບດ້ອຍພັດທະນາ. ນອກຈາກນັ້ນ, ຜູ້ເຂົ້າຮ່ວມກໍ່ໄດ້ມີການຄົ້ນຄ້ວາລົງເລິກ ແຕ່ລະບັນຫາໄປພ້ອມໆກັນ ແລະ ປະກອບຄຳຄິດຄຳເຫັນຢ່າງເປັນຂະບວນ.





ພາບ: ວິໄລວັດ ມຸງຄຸນໄພສານ

ຂ່າວ: ວິລັນຍາ ອັກຄະວົງ